ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3009 /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2022

# ຂໍ້ຕົກລົງ

## ວ່າດ້ວຍການນໍາໃຊ້ລະບົບເອເລັກໂຕຣນິກ NSWA⁺ ເຂົ້າໃນຄຸ້ມຄອງການແຈ້ງພາສີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍທຸລະກໍາເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍລາຍເຊັນເອເລັກໂຕຣນິກ ສະບັບເລກທີ 59/ສພຊ, 12 ທັນວາ 2018;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

## ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງ:

**ມາດຕາ 1** ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດໍາເນີນການນໍາເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ຕ້ອງສະເໜີຕໍ່ກົມພາສີ ເພື່ອລົງທະບຽນເປັນຜູ້ແຈ້ງພາສີ (ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ) ຈຶ່ງສາມາດນໍາໃຊ້ລະບົບເອເລັກໂຕຣນິກເຂົ້າໃນການແຈ້ງພາສີ. ຜູ້ແຈ້ງພາສີ ຕ້ອງນໍາໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ທີ່ເຊື່ອມໂຍງເຂົ້າກັບລະບົບແຈ້ງພາສີເອກະເອເລັກໂຕຣນິກ (ASYCUDA) ຊຶ່ງເອີ້ນວ່າ ລະບົບ NSWA⁺ ເຂົ້າໃນການແຈ້ງພາສີໂດຍສັງເຂບ ແລະ ແຈ້ງພາສີເປັນລາຍອຽດ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຄຸ້ມຄອງການແຈ້ງພາສີ ແນໃສ່ຮັບປະກັນການຄວບຄຸມກວດກາຢ່າງຮັດກຸມ ແລະ ຈັດເກັບລາຍຮັບເຂົ້າງົບປະມານ ໄດ້ຢ່າງໂປ່ງໃສ, ຖືກຕ້ອງ ແລະ ຄົບຖ້ວນ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 2** ຮັບຮອງເອົາຂໍ້ມູນ ແລະ ເອກະສານ ແບບເອເລັກໂຕຣນິກ ທີ່ຜູ້ແຈ້ງພາສີປ້ອນເຂົ້າ ແລະ ລົງທະບຽນໃນລະບົບ NSWA⁺ ມີຄຸນຄ່າທາງກົດໝາຍທຽບເທົ່າກັບເອກະສານເປັນເຈ້ຍ ຕາມກົດໝາຍວ່າດ້ວຍດ້ວຍທຸລະກໍາເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012.

**ມາດຕາ 3** ຮັບຮອງເອົາລາຍເຊັນເອເລັກໂຕຣນິກ ຂອງຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ທີ່ນໍາໃຊ້ເຂົ້າໃນການຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ ແລະ ເອກະສານແຈ້ງພາສີ ແບບເອເລັກໂຕຣນິກ ຊຶ່ງລາຍເຊັນເອເລັກໂຕຣນິກ ທີ່ລົງທະບຽນຢ່າງຖືກຕ້ອງ ມີຄຸນຄ່າທາງກົດໝາຍທຽບເທົ່າລາຍເຊັນ ແລະ ຕາປະທັບ ຂອງຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ຕາມກົດໝາຍວ່າດ້ວຍລາຍເຊັນເອເລັກໂຕຣນິກ ສະບັບເລກທີ 59/ສພຊ, 12 ທັນວາ 2018.

ມາດຕາ 4 ໃຫ້ຢຸດຕິການນໍາໃຊ້ແບບພິມເອກະສານແຈ້ງພາສີທີ່ເປັນເຈ້ຍ ແລະ ຫັນໄປນໍາໃຊ້ລະບົບເອເລັກໂຕຣນິກເຂົ້າໃນຂັ້ນຕອນການແຈ້ງພາສີທັງໝົດ.

ມາດຕາ 5 ໃຫ້ຜູ້ແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີ ເກັບຮັກສາຂໍ້ມູນ ແລະ ເອກະສານແຈ້ງພາສີ ໃນຮູບແບບເອເລັກໂຕຣນິກ ເພື່ອເປັນຫຼັກຖານສໍາລັບການກວດສອບຄືນ ຫຼື ການກວດກາ ຫຼັງການແຈ້ງພາສີຕາມລະບຽບການ.

ມາດຕາ 6 ຜູ້ປະກອບການທີ່ພັດທະນາລະບົບເອເລັກໂຕຣນິກຮັບໃຊ້ການດໍາເນີນທຸລະກິດຂອງຕົນເອງ ເຊັ່ນ: ລະບົບສັ່ງຊື້ເອເລັກໂຕຣນິກ, ລະບົບຕິດຕາມການຂົນສົ່ງເອເລັກໂຕຣນິກ ຫຼື ລະບົບອື່ນໆ ທີ່ມີຂໍ້ມູນຄືກັນກັບຂໍ້ມູນການແຈ້ງພາສີ ແມ່ນສາມາດສະເໜີຕໍ່ກົມພາສີ ເພື່ອເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນເອເລັກໂຕຣນິກໂດຍກົງ ແນໃສ່ຫຼຸດຜ່ອນຂັ້ນຕອນການປ້ອນຂໍ້ມູນທີ່ຊໍ້າຊ້ອນ.

ມາດຕາ 7 ຜູ້ແຈ້ງພາສີ ທີ່ນໍາໃຊ້ລະບົບ NSWA+ ເຂົ້າໃນການແຈ້ງພາສີ ຕ້ອງຊໍາລະຄ່າບໍລິການນໍາໃຊ້ລະບົບແຈ້ງພາສີປະຕູດຽວ ແລະ ຄ່າບໍລິການນໍາໃຊ້ລະບົບ ASYCUDA ຕາມອັດຕາທີ່ໄດ້ກໍານົດໃນ ລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

ມາດຕາ 8 ໃຫ້ທົດລອງນໍາໃຊ້ລະບົບ NSWA+ ເຂົ້າໃນການຄຸ້ມຄອງການແຈ້ງພາສີ ໄລຍະ ສາມ(3) ເດືອນ ຢູ່ດ່ານພາສີສາກົນສິນຄ້າທ່າບົກທ່ານາແລ້ງ. ຫຼັງຈາກນັ້ນ ໃຫ້ປະເມີນຜົນ ແລະ ລາຍງານຕໍ່ກະຊວງການເງິນ ເພື່ອພິຈາ ລະນາອະນຸມັດໃຫ້ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ມາດຕາ 9 ມອບໃຫ້ກົມພາສີ, ຜູ້ພັດທະນາລະບົບ NSWA+ ແລະ ທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຊາບ ແລະ ພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 10 ຂໍ້ຕົກລົງສະບັບນີ້ມີຜົນສັກສິດນໍາໃຊ້ນັບແຕ່ວັນທີ 01 ຕຸລາ 2022 ເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນໂຈມ ອຸບົນປະເສີດ